| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດສໍາຫລວດແຮ່ທາດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| MoEM-GMD-14 | 21.09.2017 | ກົມທໍລະນີສາດ ແລະ ແຮ່ທາດ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | B - ອຸດສາຫະກໍາບໍ່ແຮ່ ແລະ ການຂຸດຄົ້ນ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ແຮ່ທາດແມ່ນໜຶ່ງໃນຊັບພະຍາກອນທີ່ສໍາຄັນຂອງ ສປປ ລາວ ຈຶ່ງມີຄວາມຈໍາເປັນຢ່າງຍິ່ງທີ່ຈະຕ້ອງ ຄວບຄຸມການດໍາເນີນກິດຈະການທັງໝົດທີ່ຕິດພັນກັບ ທຸລະກິດແຮ່ທາດດັ່ງກ່າວ ດ້ວຍການກໍານົດໃຫ້ຕ້ອງມີການຂໍໃບອະນຸຍາດກ່ອນເລີ່ມຕົ້ນດໍາເນີນການ ເພື່ອຫລີກລ່ຽງການດໍາເນີນກິດຈະການແຮ່ທາດໂດຍບໍ່ຖືກຕ້ອງຕາມກົດໝາຍ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ນິຕິບຸກຄົນ ທີ່ມີຈຸດປະສົງດໍາເນີນການສໍາຫລວດແຮ່ທາດ ຊຶ່ງໝາຍເຖິງ ການສຶກສາໂຄງສ້າງທາງດ້ານທໍລະນີສາດ ແລະ ແຫລ່ງແຮ່ທາດ ໃນຂອບເຂດເນື້ອທີ່ທີ່ໄດ້ກໍານົດໃຫ້ສໍາຫລວດ, ປະກອບດ້ວຍ ວຽກງານທໍລະນີສາດ, ທໍລະນີວັດຖຸ, ຂຸ້-ເຈາະ, ເຈາະອຸມົງ, ຂຸດຂຸມຄອງ, ຂຸດສ້າງ, ເກັບຕົວຢ່າງ, ວິເຄາະວິໄຈ ແລະ ອື່ນໆ ເພື່ອໃຫ້ຮູ້ປະລິມານສະສົມ ແລະ ຄຸນະພາບຂອງແຫລ່ງແຮ່ທາດ ແລ້ວກ້າວໄປສູ່ການປະເມີນຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ແລະ ເງື່ອນໄຂ ທາງດ້ານເຕັກນິກຂອງການຂຸດຄົ້ນ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ບໍ່ມີ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ສໍາລັບກິດຈະການ ກ່ຽວກັບ ການສໍາຫລວດ, ຜູ້ໄດ້ຮັບອະນຸຍາດສາມາດຊອກຫາຜູ້ລົງທຶນອື່ນ ມາຮ່ວມລົງທຶນໄດ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກລັດຖະບານ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງ ໃນການອອກໃບອະນຸຍາດ | 90 | |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ຕ້ອງເປັນວິສາຫະກິດ ຫລື ບໍລິສັດ ທີ່ໄດ້ຮັບການສ້າງຕັ້ງ ແລະ ຈົດທະບຽນດໍາເນີນທຸລກິດກ່ຽວກັບແຮ່ທາດ ຢ່າງຖືກຕ້ອງ 2. ມີຖານະທາງດ້ານການເງິນທີ່ໝັ້ນຄົງ, ສາມາດມີແຫລ່ງທຶນພຽງພໍ ແລະ ມີຫລັກຊັບຄໍ້າປະກັນ ຕາມລະບຽບການ 3. ມີປະຫວັດຄວາມເປັນມາ ກ່ຽວກັບ ການດໍາເນີນທຸລະກິດທີ່ດີ ແລະ ໜ້າເຊື່ອຖື 4. ມີວິຊາການທາງດ້ານເຕັກນິກ ແລະ ປະສົບການ ກ່ຽວກັບ ການຊອກຄົ້ນແຮ່ທາດ 5. ພື້ນທີ່ໃນການສໍາຫລວດແຮ່ທາດນັ້ນ ຕ້ອງອີງຕາມຜົນຂອງການຊອກຄົ້ນແຮ່ທາດທີ່ໄດ້ດໍາເນີນມາແລ້ວ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ປະຕິເສດໃນກໍລະນີຜູ້ລົງທຶນ ມີຄຸນະສົມບັດບໍ່ຄົບຖ້ວນ ຫລື ກໍລະນີທີ່ ຜູ້ລົງທຶນ ບໍ່ສາມາດປະຕິບັດຕາມເງື່ອນໄຂທີ່ລະບຸໄວ້ ຕາມໃບອະນຸຍາດຊອກຄົ້ນ ຫລື ເງື່ອນໄຂໃນສັນຍາທີ່ລົງນາມກັບລັດຖະບານ ຜ່ານມາໄດ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 360 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | ຕໍ່ອາຍຸໄດ້ອີກ 2 ປີ ພາຍໃຕ້ເງື່ອນໄຂ ດັ່ງນີ້: 1. ສັນຍາ ແລະ ໃບອະນຸຍາດຕ່າງໆ ທີ່ກ່ຽວຂ້ອງ ຍັງມີຜົນສັກສິດ 2. ການຕໍ່ອາຍຸຕ້ອງສະເໜີລ່ວງໜ້າ 3 ເດືອນກ່ອນວັນໝົດອາຍຸ 3. ບໍລິສັດ ໄດ້ປະຕິບັດພັນທະທາງດ້ານການເງິນ, ພັນທະຕໍ່ທ້ອງຖິ່ນ ແລະ ພັນທະອື່ນໆ ຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ແລະ ສັນຍາທີ່ໄດ້ເຊັນກັບລັດຖະບານ 4. ບົດລາຍງານຜົນການສໍາຫລວດ ທົ່ວເຂດສໍາປະທານ ຕ້ອງສໍາເລັດຢ່າງໜ້ອຍ 60% ຂອງແຜນການທີ່ຮັບຮອງ 5. ແຜນການສືບຕໍ່ການສໍາຫລວດ ຕ້ອງໄດ້ຖືກຮັບຮອງຈາກ ກະຊວງກ່ຽວຂ້ອງ ຖ້າບໍ່ມີການສະເໜີຕໍ່ ຖືວ່າ ໃບອະນຸຍາດໝົດຄວາມສັກສິດ ໂດຍອັດຕະໂນມັດ. |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມແບບຟອມຄໍາ ຮ້ອງ ຫລື | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມ | ຄ່າໃຊ້ຈ່າຍທັງໝົດ |

| ຄ່າທໍານຽມ | | | | |
|---|---|---|---|---|
| ບໍ່? | | | ຄໍາຮ້ອງ | |
| ແມ່ນແລ້ວ | 300000.00 | 0.00 | 0.00 | 300000.00 |
| ຄໍາເຫັນ | ອີງຕາມ: ລັດຖະດໍາລັດ ເລກທີ 03/ປທ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 300000.00 | 0.00 | 0.00 | 300000.00 |
| ຄໍາເຫັນ | ອີງຕາມ: ລັດຖະດໍາລັດ ເລກທີ 03/ປທ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ກົດໝາຍວ່າດ້ວຍ ແຮ່ທາດ (ສະບັບປັບປຸງ) | 02/ສພຊ | 26.12.2011 | ພາກທີ III ກິດຈະການກ່ຽວກັບ ແຮ່ທາດ (ມາດຕາ 21) ພາກທີ IV ທຸລະກິດກ່ຽວກັບແຮ່ທາດ (ມາດຕາ 34 ຫາ ມາດຕາ 37) |

| ເອກະສານປະກອບ |
|---|
| ຊື່ເອກະສານ |
| ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ |
| ແຜນດໍາເນີນການກິດຈະກໍາແຮ່ທາດ |
| ໃບຢັ້ງຢືນການມອບເລກປະຈໍາຕົວຜູ້ເສຍອາກອນ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈໍາກັດ |
| ໃບອະນຸຍາດຊອກຄົ້ນແຮ່ທາດ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2017 | 12 | 0 |
| 2016 | 20 | 0 |